**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງບໍລິຄໍາໄຊ
ພະແນກກະສິກໍາ ແລະ ສິ່ງແວດລ້ອມ
ໂຄງການ ພູມີທັດ ແລະ ຊີວິດການເປັນຢູ່ ໃນ ສປປ ລາວ

ເລກທີ:..1219../ກສຂ
ບໍລິຄໍາໄຊ, ວັນທີ:..13 ມີນາ 2026.

# ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

**ເຖິງ: ບັນດາບໍລິສັດກໍ່ສ້າງຂົວ ແລະ ທາງ;**

1. ພະແນກກະສິກໍາ ແລະ ສິ່ງແວດລ້ອມແຂວງ, ຂະແໜງປ່າໄມ້ ແຂວງ (ໂຄງການພູມີທັດ ແລະ ຊີວິດການເປັນຢູ່ໃນ ສປປ ລາວ) ໄດ້ຮັບທຶນກູ້ຢືມຈາກທະນາຄານໂລກ ສໍາລັບ ການຈັດຕັ້ງປະຕິບັດ ໂຄງການພູມີທັດ ແລະ ຊີວິດການເປັນຢູ່ ໃນ ສປປ ລາວ ເພື່ອດໍາເນີນ ວຽກງານການກໍ່ສ້າງສ້ອມແປງເສັ້ນທາງຊອຍ, ບ້ານໂພນງາມ, ເມືອງໄຊຈໍາພອນ, ແຂວງບໍລິຄໍາໄຊ ດ້ວຍການປະມູນແບບສົມທຽບລາຄາ.
2. ເຈົ້າຂອງໂຄງການ ຂໍເຊີນບໍລິສັດຂອງທ່ານ ຍື່ນຊອງປະມູນແບບສົມທຽບລາຄາ ສໍາລັບ ວຽກການກໍ່ສ້າງສ້ອມແປງເສັ້ນທາງຊອຍ, ບ້ານໂພນງາມ, ເມືອງໄຊຈໍາພອນ, ແຂວງບໍລິຄໍາໄຊ. ໄລຍະເວລາໃນການກໍ່ສ້າງແມ່ນ 04 ເດືອນ ພາຍຫລັງເຊັນສັນຍາ ຫຼື ໜັງສືແຈ້ງສັ່ງວຽກ.
3. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນແບບສົມທຽບລາຄາ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້ - ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ **2** ພະຈິກ **2017** ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງປະມູນຕ້ອງສົ່ງກ່ອນເວລາ ກ່ອນເວລາ 10:30 ໂມງ, ວັນທີ **27** ມີນາ 2026 ຢູ່ທີ່ຫ້ອງປະຊຸມຂະແໜງປ່າໄມ້, ພະແນກກະສິກໍາ ແລະ ສິ່ງແວດລ້ອມແຂວງ ຕັ້ງຢູ່ບ້ານ ທົ່ງໄຊ, ເມືອງປາກຊັນ, ແຂວງບໍລິຄໍາໄຊ. ຕິດຕໍ່ພົວພັນ ທ່ານ ບຸນທ່ຽງ ວົງສຸນາລາດ ຫົວໜ້າຂະແໜງປ່າໄມ້(ຜູ້ປະສານງານໂຄງການຂັ້ນແຂວງ)ໄດ້ທີ່ເບີໂທລະສັບ: (+856) 20 55577709 ແລະ ນາງ ອຸທຸມພອນ ພຽນໄພວົງ ຜູ້ຊ່ວຍວຽກຈັດຊື້-ຈັດຈ້າງໂຄງການ (+856) 20 55538006, ຊອງປະມູນສົມທຽບລາຄາທຸກໆຊອງຈະໄດ້ເປີດໃນເວລາ **10**:30 ໂມງ, ວັນທີ **27** ມີນາ 2026 ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ສົນໃຈຕ້ອງການເຂົ້າຮ່ວມ.

**ຫົວໜ້າພະແນກ**
**(ຄະນະຊີ້ນໍາໂຄງການຂັ້ນແຂວງ)**

ພະແນກ ກະສິກໍາ ແລະ ສິ່ງແວດລ້ອມ ແຂວງບໍລິຄໍາໄຊ

**ໄພຄໍາ ຈັນທະສຸກ**
**Phokham CHANTHASOUK**